ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----===×0×===----

<u>ນາຍົກລັດຖະມົນຕີ</u>    ເລກທີ 67 /ນຍ

# ດຳລັດ
## ວ່າດ້ວຍການຢຸດຕິການຂຸດຄົ້ນໄມ້

------

ຜ່ານການຈັດຕັ້ງປະຕິບັດແຜນນະໂຍບາຍ, ມະຕິ, ດຳລັດ, ຄຳສັ່ງກ່ຽວກັບວຽກງານປ່າໄມ້ ທີ່ພັກ-ລັດວາງອອກ ໂດຍສະເພາະແມ່ນມະຕິຂອງກອງປະຊຸມປ່າໄມ້ທົ່ວປະເທດ ຄັ້ງທີ I ໃນປີ ໑໙໘໙ ມາຮອດປະຈຸບັນ ມີບາງອັນປະຕິບັດໄດ້ດີສົມຄວນ, ຫລາຍທ້ອງຖິ່ນໄດ້ເຫັນຄວາມສຳຄັນຂອງ ວຽກງານປ່າໄມ້ ແລະການປົກປັກຮັກສາສິ່ງແວດລ້ອມ, ເລີ່ມມີການຈັດຫາອາຊີບຄົງທີ່ ໃຫ້ຊາວໄຮ່ຈຳນວນຫນຶ່ງ ແລະເຮັດທົດລອງການມອບດິນ ມອບປ່າໃຫ້ປະຊາຊົນ... ຄຽງຄູ່ກັນນັ້ນ ໃນຂົງເຂດການປ່າໄມ້ກໍຍັງມີຂໍ້ຂາດຕົກບົກພ່ອງ ແລະຄວາມຜິດພາດອັນຫນັກຫນ່ວງຫລາຍປະການຄື: ຂະແຫນງປ່າໄມ້, ຂະແຫນງການອື່ນໆ ແລະອຳນາດການປົກຄອງທ້ອງຖິ່ນຍັງບໍ່ທັນປະຕິບັດພາລະບົດບາດຂອງຕົນເປັນຢ່າງດີ, ປະກົດການອະນາທິປະໄຕໃນການອອກຫນັງສືອະນຸຍາດຂຸດຄົ້ນໄມ້, ປຸງແຕ່ງໄມ້, ຄ້າຂາຍໄມ້ ແລະການໃຫ້ສຳປະທານປ່າໄມ້ ໂດຍບໍ່ຖືກຕ້ອງຕາມຫລັກວິຊາການ ແລະລະບຽບກົດຫມາຍ ໄດ້ເກີດຂຶ້ນໃນຫລາຍທ້ອງຖິ່ນ; ຫລາຍບໍລິສັດ ແລະວິສາຫະກິດໄດ້ດຳເນີນການຂຸດຄົ້ນໄມ້ ແລະປຸງແຕ່ງໄມ້ຢ່າງຊະຊາຍດ້ວຍຫລາຍຮູບການ. ຮ້າຍແຮງໄປກວ່ານັ້ນ ຍັງມີປະກົດການລັກລອບຕັດໄມ້, ປອມແປງເອກະສານ ແລະໃຊ້ເລ່ລ່ຽມຊື້ຈ້າງ<u>ຫລອກລວງ</u>ພະນັກງານ ແລະປະຊາຊົນໃນວຽກງານທຸລະກິດໄມ້. ຂໍ້ຂາດຕົກບົກພ່ອງ ແລະຄວາມຜິດພາດເຫລົ່ານັ້ນ ໄດ້ເຮັດໃຫ້ຊັບພະຍາກອນປ່າໄມ້ ແລະສິ່ງແວດລ້ອມຂອງປະເທດເຮົາຖືກທຳລາຍຢ່າງຮ້າຍແຮງຂຶ້ນທຸກໃຈ.

ເພື່ອແກ້ໄຂຂໍ້ຄົງຄ້າງດັ່ງກ່າວນັ້ນ ແລະອີງຕາມການຕົກລົງຂອງກອງປະຊຸມລັດຖະບານ ຄັ້ງວັນທີ່ ໒໓ ສິງຫາ ໑໙໙໑,

ນາຍົກລັດຖະມົນຕີ ອອກດຳລັດ :

<u>ມາດຕາ ໑</u> : ໃຫ້ຢຸດຕິການຂຸດຄົ້ນໄມ້ ໃນຂອບເຂດທົ່ວປະເທດ.

<u>ມາດຕາ ໒</u> : ໃຫ້ຈັດຕັ້ງການສຳຫລວດກວດກາ ແລະວາງມາດຕະການກ່ຽວກັບການຄຸ້ມຄອງ, ການຂຸດຄົ້ນ, ການປຸງແຕ່ງ, ການຄ້າຂາຍໄມ້ ແນໃສ່ເຮັດໃຫ້ການຄຸ້ມຄອງປ່າໄມ້ ແລະທຸລະກິດໄມ້ເຂົ້າສູ່ລະບຽບຫລັກການ ແລະກົດຫມາຍ.

<u>ມາດຕາ ໓</u> : ໃຫ້ຢຸດຕິການເຄື່ອນໄຫວ ແລະຍົກເລີກທັນທີບັນດາຫົວຫນ່ວຍທຸລະກິດປ່າໄມ້,

ໂຮງເລື່ອຍ, ໂຮງຊອຍ, ໂຮງງານປຸງແຕ່ງໄມ້ອື່ນໆ ແລະບັນດາໂຮງງານທີ່ນຳໃຊ້ວັດຖຸໄມ້ເປັນພະລັງງານທີ່ສ້າງຕັ້ງຂຶ້ນໂດຍບໍ່ຖືກຕ້ອງຕາມດຳລັດຂອງສະພາລັດຖະມົນຕີ ສະບັບເລກທີ ໑໑໗/ປສລ ລົງວັນທີ ໕/໑໐/໑໙໘໙ ແລະລະບຽບການອື່ນໆ ຂອງບັນດາຂະແໜງການທີ່ກ່ຽວຂ້ອງ.

ມາດຕາ ໔ : ໃຫ້ກວດກາຄືນບັນດາຫົວໜ່ວຍທຸລະກິດປຸງແຕ່ງໄມ້ ແລະບໍລິສັດປ່າໄມ້ຂອງລັດລວມທັງບັນດາຫົວໜ່ວຍທີ່ມີການຮ່ວມມືກັບຕ່າງປະເທດ ເພື່ອສະເໜີວິທີການແກ້ໄຂແຕ່ລະກໍລະນີ ໃຫ້ລັດຖະບານກາງ.

ມາດຕາ ໕ : ໃຫ້ສືບຕໍ່ທຳການສຳຫຼວດຈັດສັນປ່າໄມ້ໃຫ້ສຳເລັດໂດຍໄວ ໂດຍໃຫ້ກຳນົດແບ່ງເຂດປ່າໄມ້ເປັນເຂດປ່າປ້ອງກັນ, ເຂດປ່າສະຫງວນ, ເຂດປ່າເຫຼົ່າ ເພື່ອຟື້ນຟູໃຫ້ກາຍເປັນປ່າດົງຄືນໃໝ່ ແລະເຂດປ່າທຸລະກິດ (ປ່າຜະລິດ). ໃຫ້ກະຊວງກະສິກຳ-ປ່າໄມ້ສ້າງຂໍ້ກຳນົດ, ກົດລະບຽບສະເພາະແຕ່ລະເຂດປ່າໄມ້ນັ້ນ.

ມາດຕາ ໖ : ໃຫ້ຈັດຕັ້ງເຜີຍແຜ່ ແຜນນະໂຍບາຍ, ມະຕິ, ດຳລັດ ແລະຄຳສັ່ງຕ່າງໆ ກ່ຽວກັບຂົງເຂດການປ່າໄມ້ ແລະການປ້ອງກັນສິ່ງແວດລ້ອມຢ່າງກວ້າງຂວາງ ແລະເລິກເຊິ່ງ ໂດຍນຳໃຊ້ທຸກພາຫະນະສື່ມວນຊົນ ແລະຮູບການໂຄສະນາອື່ນໆ ໃຫ້ພະນັກງານ, ທະຫານ, ຕຳຫຼວດ ແລະປະຊາຊົນຮັບຮູ້ເຊື່ອມຊຶມ ແລະພ້ອມກັນປະຕິບັດຢ່າງເຂັ້ມງວດ.

ມາດຕາ ໗ : ມອບໃຫ້ກະຊວງກະສິກຳ-ປ່າໄມ້ ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງອື່ນໆ ເພື່ອພ້ອມກັນເຮັດຄຳແນະນຳ ແລະຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ສຳເລັດຜົນເປັນຈິງ ໂດຍການສົມທົບທັງສາມວິທີການ ( ສຶກສາອົບຮົມ, ລະບຽບກົດໝາຍ ແລະເສດຖະກິດ ), ເຊີດຊູຈິດໃຈເປັນເຈົ້າ ແລະປຸກລະດົມປະຊາຊົນເຂົ້າຮ່ວມຢ່າງກວ້າງຂວາງ.

ມາດຕາ ໘ : ບັນດາລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ, ບັນດາເຈົ້າແຂວງ, ເຈົ້າຄອງກຳແພງນະຄອນ ໃນທົ່ວປະເທດ ຕ້ອງປະຕິບັດດຳລັດສະບັບນີ້ຢ່າງເຂັ້ມງວດ ຕາມພາລະບົດບາດຂອງໃຜລາວ.

ມາດຕາ ໙ : ດຳລັດສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ ໒໖ ສິງຫາ ໑໙໙໑

ນາຍົກລັດຖະມົນຕີ

ສີພັນດອນ